ຕອນທ້າຍ, ທ່ານ ຈອມສີ ລັດຕະນະປັນ ກ່າວว່າ: ວຽກງານໃນທີ່ຈະສຸມໃສ່ໃນຕໍ່ໜ້າແຕ່ລະດ້ານ ດັ່ງນີ້:

ດ້ານນິຕິບັນຍັດ: ເພີ່ມທະວີໃນການປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍ, ນິຕິກຳຕ່າງໆ ໃຫ້ສົມຄູ່ກັບການເປັນຕົວແທນຂອງປະຊາຊົນ; ເອົາໃຈໃສ່ຊຸກຍູ້ອົງການປົກຄອງແຂວງກໍຄືພາກສ່ວນກ່ຽວຂ້ອງສ້າງ ແລະ ປັບປຸງ ນິຕິກຳໃຕ້ກົດໝາຍ ໃຫ້ໄດ້ດີ; ເອົາໃຈໃສ່ຄົ້ນຄວ້າປະກອບຄຳເຫັນ ແລະ ເປັນເຈົ້າການນຳເອົາຮ່າງກົດໝາຍ, ນິຕິກຳມາທາບທາມ ຢູ່ເຂດເລືອກຕັ້ງຂອງຕົນ ເພື່ອເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ໄດ້ຈັດຂຶ້ນ; ເອົາໃຈໃສ່ພົບປະຜູ້ມີສິດເລືອກຕັ້ງ ຢູ່ອ້ອມຂ້າງແຂວງ, ບັນດາເມືອງ ເຜີຍແຜ່ຜົນເນື້ອໃນສຳເລັດຂອງກອງປະຊຸມ ສະພາແຫ່ງຊາດ ຕິດພັນກັນການເກັບກຳຂໍ້ມູນ, ການຟັງຄຳຄິດເຫັນ, ຂໍ້ສະເໜີຕ່າງໆ ຂອງປະຊາຊົນ ເພື່ອເປັນຂໍ້ມູນສ່ອງແສງຕໍ່ກອງປະຊຸມສະພາແຫ່ງຊາດ ກໍຄືກຳມະການຂອງແຕ່ລະກຳມາທິການ ແລະ ພາກສ່ວນຕ່າງໆ; ການລົງພົບປະກັບປະຊາຊົນ ເພື່ອສ້າງຄວາມເຊື່ອໝັ້ນ, ຄວາມເຂົ້າໃຈຂອງປະຊາຊົນຕໍ່ການພັດທະນາຊີວິດການເປັນຢູ່ໃຫ້ດີຂຶ້ນ, ການແກ້ໄຂບັນຫາຕ່າງໆ ທີ່ປະຊາຊົນສະເໜີ ແລະ ຄວາມຂັດຂ້ອງໜ້ອງໃຈ ຊ່ວຍຄະນະພັກ, ອຳນາດການປົກຄອງ ແຕ່ລະຂັ້ນໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ; ຮັບປະກັນການລົງພົບປະກັບປະຊາຊົນໃນເຂດເລືອກຕັ້ງຂອງຕົນໃຫ້ກວມອັດຕາສ່ວນ 5% ຂອງຈຳນວນບ້ານຂຶ້ນໄປ (ລວມ 6 ທ່ານ ໃຫ້ກວມ 30% ຕໍ່ຄັ້ງ).

ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ: ເພີ່ມທະວີຄວາມຮັບຜິດຊອບໜ້າທີ່ການເມືອງ ກັບພາກສ່ວນກ່ຽວຂ້ອງໃນການຄົ້ນຄວ້າກະກຽມເນື້ອໃນຕ່າງໆໃຫ້ຮັດກຸມ, ລະອຽດຊັດເຈນເພື່ອນຳເຂົ້າພິຈາລະນາ, ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ IX ເປັນຕົ້ນແມ່ນພິຈາລະນາຮັບຮອງເອົານິຕິກຳຕ່າງໆ; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2022, ບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ, ບົດລາຍງານຂອງສານປະຊາຊົນ, ອົງການໄອຍະການປະຊາຊົນ, ບົດສະຫລຸບການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາແຫ່ງຊາດ, ແລະ ທິດທາງແຜນການຕໍ່ໜ້າ ແລະ ບັນຫາອື່ນໆທີ່ສຳຄັນ.

ດ້ານການຕິດຕາມກວດກາ: ເອົາໃຈໃສ່ປະສານສົມທົບກັບອົງການກວດກາລັດ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນແຂວງ ເພື່ອເຂົ້າຮ່ວມຂະບວນການຕິດຕາມກວດກາຕໍ່ການເຄື່ອນໄຫວຂອງອົງການອຳນາດລັດຂັ້ນທ້ອງຖິ່ນໃຫ້ເປັນໄປຕາມຂັ້ນຕອນຂອງກົດໝາຍว່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຕ້ອງມີແຜນການ, ກຳນົດຈຸດສຸມຂອງການຕິດຕາມກວດກາໃຫ້ຊັດເຈນ, ສອດຄ່ອງກັບແຕ່ລະໄລຍະ; ຫລີກເວັ້ນການຕິດຕາມກວດກາແບບລວມໆ, ຊ້ຳຊ້ອນພາໃຫ້ເສຍເວລາ ແລະ ງົບປະມານ; ເອົາໃຈໃສ່ເຂົ້າຮ່ວມກອງປະຊຸມຂອງອົງການປົກຄອງແຂວງ ແລະ ພະແນກການ, ອົງການລັດທຽບເທົ່າພະແນກການຂັ້ນແຂວງ ຈັດຂຶ້ນໂດຍໜ້າທີ່ ແລະ ຕາມການເຊີນ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ແລະ ແຜນພັດທະນາຂອງຂະແໜງການ ໂດຍສະເພາະແມ່ນຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງບໍ່ແກ້ວ ໄດ້ຮັບຮອງເອົາ; ປະສານສົມທົບກັບ ສະພາປະຊາຊົນແຂວງຕິດຕາມກວດກາບົດລາຍງານ, ນິຕິກຳຕ່າງໆທີ່ເຫັນວ່າຂັດກັບລັດຖະທຳມະນູນ ແລະ ກົດໝາຍ ຫລື ມະຕິຂອງກອງປະຊຸມສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນແຂວງ ເພື່ອສະເໜີໃຫ້ອົງການກ່ຽວຂ້ອງປັບປຸງ ຫລື ລົບລ້າງ. ຄຽງຄູ່ກັນນັ້ນ ກໍຕ້ອງໄດ້ເອົາໃຈໃສ່ຕິດຕາມກວດກາການອອກນິຕິກຳໃຕ້ກົດໝາຍ ຂອງອົງການປົກຄອງທ້ອງຖິ່ນ ເພື່ອໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ແນວທາງນະ�โยบายຂອງພັກ ແລະ ນິຕິກຳຂອງອົງການລັດ ຂັ້ນເທິງວາງອອກ.

ສພຊ ຈຳປາສັກ ຕິດຕາມການເຊົ່າ ສຳປະທານເນື້ອທີ່ດິນລັດ ຢູ່ 2 ເມືອງ

(ສພຊ) ໃນລະຫວ່າງ ວັນທີ 9-10 ພະຈິກ 2021 ທ່ານ ສົມສີ ມະນີນິນ ຮອງປະທານສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ພ້ອມດ້ວຍ ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສພຂ ຈຳປາສັກ ໄດ້ສືບຕໍ່ເຄື່ອນໄຫວ ຕິດຕາມກວດການການເຊົ່າ, ສຳ ປະທານເນື້ອທີ່ດິນລັດ, ການຄຸ້ມ ຄອງ ແລະ ພັດທະນາປ່າໄມ້ ຢູ່ ເຂດເມືອງປາກຊ່ອງ ແລະ ເມືອງ ມຸນລະປາโมກ ແຂວງຈຳປາສັກ.

ຄະນະດັ່ງກ່າວ ໄດ້ເປີດ ກອງປະຊຸມເຮັດວຽກຮ່ວມກັບ ຄະນະນຳຂອງ 2 ເມືອງ ເຊິ່ງ ການເຄື່ອນໄຫວຢູ່ເມືອງປາກ ຊ່ອງ, ທ່ານ ນາງ ບອນຄຳ ເວີນ ໂພຄຳ ຫົວໜ້າອົງການກວດກາ ລັດ ທັງເປັນສະມາຊິກສະພາປະ ຊາຊົນແຂວງ ປະຈຳເຂດເລືອກ ຕັ້ງເມືອງປາກຊ່ອງ ໄດ້ມີຄຳເຫັນ ກ່າວຕ້ອນຮັບ ແລະ ລາຍງານ ສະພາບລວມຂອງເມືອງໂດຍສັງ ເຂບ ແລະ ໄດ້ລາຍງານກ່ຽວກັບ ການຈັດຕັ້ງປະຕິບັດວຽກງານ ການໃຫ້ເຊົ່າ-ສຳປະທານເນື້ອທີ່ ດິນລັດ, ການຄຸ້ມຄອງ ແລະ ພັດ ທະນາປ່າໄມ້ ຈາກຂະແໜງການ ກ່ຽວຂ້ອງຂອງເມືອງປາກຊ່ອງ.

ການເຄື່ອນໄຫວຢູ່ເມືອງ ມຸນລະປາโมກ, ທ່ານ ວັນນະ ເລດ ແກ້ວຈັນທາ ຮອງເຈົ້າເມືອງ ເມືອງມຸນລະປາโมກ ໄດ້ລາຍ ງານກ່ຽວກັບສະພາບລວມ ແລະ ການໃຫ້ເຊົ່າ, ສຳປະທານເນື້ອທີ່ ດິນລັດ, ການຄຸ້ມຄອງ ແລະ ພັດ ທະນາປ່າໄມ້ ພ້ອມທັງໄດ້ຮັບຟັງ ການຊີ້ແຈງຈາກບັນດາຂະແໜງ ການທີ່ກ່ຽວຂ້ອງຂອງເມືອງ ຕໍ່ຂໍ້ ຊັກຖາມຂອງຄະນະກຳມະການ ເສດຖະກິດ, ແຜນການ ແລະ ການເງິນ ສພຂ ຈຳປາສັກ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ.

ໂອກາດດັ່ງກ່າວ, ທ່ານ ສົມສີ ມະນີນິນ ໄດ້ມີຄຳເຫັນ ໂອ້ລົມຕໍ່ຄະນະນຳຂອງ 2 ເມືອງ ເຊິ່ງທ່ານໄດ້ສະແດງຄວາມຍ້ອງ ຍໍຊົມເຊີຍຕໍ່ການຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດວຽກງານທີ່ ຍາດໄດ້ຜົນສຳເລັດໃນຫລາຍ ດ້ານ ແລະ ເນັ້ນໜັກໃຫ້ຂະແໜງ ການທີ່ກ່ຽວຂ້ອງທັງ 2 ເມືອງ ຈົ່ງສືບຕໍ່ເພີ່ມທະວີການຈັດຕັ້ງ ປະຕິບັດວຽກງານ ຕາມພາລະ ບົດບາດ, ສິດ ແລະ ໜ້າທີ່ຄວາມ ຮັບຜິດຊອບຂອງຕົນ ໃຫ້ມີຜົນ ສຳເລັດ ຮັບປະກັນປະສິດຕິພາບ, ຄວາມຖືກຕ້ອງສອດຄ່ອງຕາມ ລະບຽບກົດໝາຍ.

ຮອງປະທານ ສພຂ ພ້ອມຄະນະ ຍັງໄດ້ເຄື່ອນໄຫວ ກວດກາຕົວຈິງຢູ່ຈຸດເນື້ອທີ່ດິນ ທີ່ໃຫ້ການເຊົ່າສຳປະທານຂອງ 2 ເມືອງອີກດ້ວຍ.

(ສພຂ ຈຳປາສັກ)

ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານວິຊາການ ສພຂ ແລະ ຜູ້ຊ່ວຍວຽກຄະນະ ສສຂ ຫົວພັນ

(ສພຊ) ໃນລະຫວ່າງ ວັນທີ 10-11 ພະຈິກ 2021 ທີ່ເມືອງສົບເບົາ ແຂວງຫົວພັນ, ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມເຝິກ ອົບຮົມສ້າງຄວາມເຂັ້ມແຂງ ໃຫ້ ແກ່ພະນັກງານວິຊາການ ສພຂ ຫົວພັນ ແລະ ວິຊາການຊ່ວຍ ວຽກຄະນະສະມາຊິກສະພາປະ ຊາຊົນແຂວງ (ສສຂ) ຫົວພັນ ປະຈຳເຂດເລືອກຕັ້ງ 10 ເມືອງ ທົ່ວແຂວງ ໂດຍການເປັນປະ ທານຂອງທ່ານ ສົມສັກ ດອນ ຈານິດ ຮອງປະທານ ສພຂ ຫົວ ພັນ; ມີບັນດາວິທະຍາກອນ ແລະ ສຳມະນາກອນຈາກ ສພຂ ຕະຫລອດຮອດສຳມະນາກອນ ຊ່ວຍວຽກຄະນະ ສສຂ ປະຈຳ ເຂດເລືອກຕັ້ງ 10 ເມືອງທົ່ວ ແຂວງ ເຂົ້າຮ່ວມທັງໝົດ 48 ຄົນ ຍິງ 13 ຄົນ.

ວາລະກອງປະຊຸມ, ຜູ້ ເຂົ້າຮ່ວມໄດ້ຮັບຟັງການນຳສະ ເໜີເນື້ອໃນເອກະສານຄື: ຮັບ ຟັງການ ເຜີຍແຜ່ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງ ຊາດ, ສະມາຊິກສະພາແຫ່ງຊາດ ແລະ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຂ, ສສຂ; ການ ເປັນເສນາທິການໃຫ້ແກ່ ສພຂ ແລະ ສສຂ, ການກະກຽມເນື້ອ ໃນກອງປະຊຸມ ສພຂ ເຊັ່ນ: ການຮ່າງບົດສະຫລຸບ ແລະ ບົດ ລາຍງານ, ການຮ່າງມະຕິກອງ ປະຊຸມ ສພຂ; ການຮ່າງເອກະ ສານທາງການ ແລະ ວຽກງານບໍ ລິຫານ, ພິທີການ; ແນະນຳການ ໃຊ້ງົບປະມານຂອງຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ ແລະ ການບັນທຶກພາບ, ສຽງ ແລະ ການຂຽນຂ່າວ ໃນການເຄື່ອນ ໄຫວວຽກງານ ສພຂ ເພື່ອເຮັດ ໃຫ້ບັນດາວິຊາການມີຄວາມຮູ້ ພື້ນຖານ ແລະ ສາມາດເຄື່ອນ ໄຫວວຽກງານໃຫ້ມີປະສິດທິ ຜົນຕັ້ງແຕ່ຫົວທີ ທັງເປັນການ ຍົກລະດັບຄວາມຮູ້, ຄວາມສາ ມາດສ້າງຄວາມຮູ້, ຄວາມເຂົ້າ ໃຈໃນການເປັນເສນາທິການ ແລະ ການສ້າງຄວາມເຂັ້ມແຂງ ໃຫ້ບັນດາວິຊາການ ສພຂ ແລະ ວິຊາການຊ່ວຍວຽກຊ່ວຍວຽກ ຄະນະ ສສຂ ປະຈຳເຂດເລືອກ ຕັ້ງເມືອງ.

ຈາກນັ້ນ, ຜູ້ເຂົ້າຮ່ວມ ກອງປະຊຸມກໍໄດ້ພ້ອມກັນສຸມ ໃສ່ປະກອບຄຳຄິດ, ຄຳເຫັນ, ແລກປ່ຽນບົດຮຽນເຊິ່ງກັນແລະ ກັນ ເຊິ່ງໄດ້ຍົກໃຫ້ເຫັນຂໍ້ສະ ດວກ ແລະ ຂໍ້ຫຍຸ້ງຍາກໃນການ ປະຕິບັດຕົວຈິງໄລຍະຜ່ານມາ ເພື່ອຖອດຖອນເປັນບົດຮຽນ ນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ. ພ້ອມນັ້ນ, ໄດ້ຈັດຕັ້ງແບ່ງກຸ່ມ ຄົ້ນຄວ້າສົນທະນາ ໂດຍອີງໃສ່ ບົດຮຽນທີ່ໄດ້ເຝິກອົບຮົມ ແລະ ບົດຮຽນທີ່ເຄີຍໄດ້ຈັດຕັ້ງປະຕິ ບັດຜ່ານມາເພື່ອສ້າງແນວຄວາມ ຄິດ, ຄວາມຮັບຮູ້, ຄວາມເຂົ້າ ໃຈ ຕໍ່ແຕ່ລະເນື້ອໃນ ແລະ ສາ ມາດນຳໄປຈັດຕັ້ງປະຕິບັດໃຫ້ ມີປະສິດທິຜົນ.

ໃນຕອນທ້າຍ, ປະທານ ກອງປະຊຸມໄດ້ມີຄຳເຫັນຕໍ່ກອງ ປະຊຸມວ່າ: ກອງປະຊຸມເຝິກອົບ ຮົມໃຫ້ວິຊາການ ສພຂ ແລະ ຜູ້ຊ່ວຍວຽກຄະນະ ສສຂ ຊຸດ ທີ II ດຳເນີນດ້ວຍຜົນສຳເລັດ ຕາມແຜນການກຳນົດໄວ້, ຜົນ ສຳເລັດຂອງກອງປະຊຸມຄັ້ງນີ້, ຖືເປັນໝາກຜົນແຫ່ງການເສີມ ຂະຫຍາຍສະຕິປັນຍາລວມໝູ່ ເປັນການຍົກລະດັບຄວາມຮູ້, ຄວາມສາມາດ, ຄວາມຮັບຜິດ ຊອບ, ຄວາມເປັນເຈົ້າການຂອງ ບັນດາ ວິທະຍາກອນ ແລະ ສຳ ມະນາກອນ ເຂົ້າໃນການຄົ້ນ ຄວ້າ, ການຈັດຕັ້ງປະຕິບັດວຽກ ງານຕົວຈິງ ແຕ່ລະເນື້ອໃນທີ່ນຳ ມາສະເໜີຄັ້ງນີ້ ບົນພື້ນຖານຍຶດ ໝັ້ນຕໍ່ສິດ ແລະ ຜົນປະໂຫຍດ ລວມຂອງແຂວງຫົວພັນ ຂອງ ປະຊາຊົນບັນດາເຜົ່າໃນທົ່ວ ແຂວງຫົວພັນ. ຄຽງຄູ່ກັນນີ້, ທ່ານໄດ້ຮຽກຮ້ອງໃຫ້ບັນດາວິ ທະຍາກອນ, ສຳມະນາກອນທັງ ໝົດ ຈົ່ງພ້ອມກັນນຳເອົາບັນດາ ເນື້ອໃນຫົວຂໍ້ຕ່າງໆ ທີ່ນຳມາຄົ້ນ ຄວ້າຢູ່ກອງປະຊຸມຄັ້ງນີ້ ນຳໄປ ສຶກສາ, ຄົ້ນຄວ້າວິໄຈຄົນໃຫ້ມີ ຄວາມຮັບຮູ້, ເຊື່ອມຊຶມ, ເຂົ້າ ໃຈ ແລະ ກຳແໜ້ນຢ່າງເລິກເຊິ່ງ ສາມາດນຳໃຊ້ເຂົ້າໃນໜ້າທີ່ວຽກ ງານໃຫ້ມີຜົນສຳເລັດເປັນຢ່າງດີ; ເອົາໃຈໃສ່ສືບຕໍ່ປັບປຸງແບບ ແຜນວິທີການເຮັດວຽກຂອງຕົນ ໃຫ້ດີ ເປັນຕົ້ນແມ່ນການສ້າງ ແຜນການ, ແຜນງານ, ໂຄງການ, ການຈັດຕັ້ງປະຕິບັດຕົວຈິງ, ການສະຫລຸບລາຍງານ ແລະ ອື່ນໆ ໃຫ້ມີການຫັນປ່ຽນດີຂຶ້ນ ພ້ອມທັງຍົກສູງຄວາມຮັບຜິດ ຊອບຕໍ່ການຈັດຕັ້ງປະຕິບັດໜ້າ ທີ່ວຽກງານທີ່ໄດ້ຮັບການມອບ ໝາຍ ແລະ ເຝິກຝົນຫລໍ່ຫລອມ ຕົນເອງຢ່າງຮອບດ້ານ ເພື່ອໃຫ້ ກ້າວໄປເຖິງເປົ້າໝາຍທີ່ຕັ້ງໄວ້.

ການເຝິກອົບຮົມຄັ້ງນີ້, ໄດ້ດຳເນີນເປັນເວລາ 2 ວັນເຕັມ ແລະ ມີຜົນສຳເລັດອັນຈົບງາມ.

(ນາງ ປຸ້ຍນິຕາ ເພັງມີໄຊ)

ສພຊ ສາລະວັນ ເຄື່ອນໄຫວເຜີຍແຜ່ພາລະບົດບາດຂອງ ສພຊ ແລະ ສພຂ ຢູ່ 3 ເມືອງຂອງແຂວງ

(ສພຊ) ໃນວັນທີ 17-19 ພະຈິກ 2021 ສະພາ ປະຊາຊົນແຂວງ (ສພຂ) ສາລະ ວັນ ໄດ້ເຄື່ອນໄຫວໂຄສະນາເຜີຍ ແຜ່ພາລະບົດບາດຂອງສະພາ ແຫ່ງຊາດ (ສພຊ) ແລະ ສພຂ ໃຫ້ແກ່ການນຳ, ພະນັກງານ ຫລັກແຫລ່ງຂັ້ນເມືອງ ແລະ ປະ ຊາຊົນບັນດາເຜົ່າ ຢູ່ 3 ເມືອງຄື: ຕະໂອ້ຍ, ຕຸ້ມລານ ແລະ ສະ ໜ້ວຍ ເຊິ່ງນຳໂດຍທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະ ທານ ສພຂ ສາລະວັນ; ມີທ່ານ ພັນໂທ ນາງ ທອງເຫລືອງ ໂຄດ ປັນຍາ ຮອງປະທານຄະນະກຳ ມະການຍຸຕິທຳ ແລະ ປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ, ທ່ານ ນາງ ອາລຸນນີ ອາດວິໄລ ຮອງປະທານຄະນະກຳມະການ ເສດຖະກິດ, ແຜນການ ແລະ ການເງິນ, ມີສະມາຊິກສະພາປະ ຊາຊົນແຂວງ (ສສຂ) ສາລະວັນ ປະຈຳເຂດເລືອກຕັ້ງແຕ່ລະເມືອງ, ບັນດາຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ ຫ້ອງການ ພ້ອມດ້ວຍວິຊາການ ເຂົ້າຮ່ວມ.

ການເຄື່ອນໄຫວຄັ້ງນີ້, ສສຂ ກໍໄດ້ຜັດປ່ຽນກັນເຜີຍແຜ່ ກົດໝາຍວ່າດ້ວຍສະພາແຫ່ງ ຊາດ, ກົດໝາຍວ່າດ້ວຍສະພາ ປະຊາຊົນຂັ້ນແຂວງ, ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ, ກົດໝາຍວ່າດ້ວຍການສ້າງນິຕິ ກຳ, ກົດໝາຍວ່າດ້ວຍການຕິດ ຕາມກວດກາຂອງສະພາແຫ່ງ ຊາດ ແລະ ສະພາປະຊາຊົນຂັ້ນ ແຂວງ, ເຜີຍແຜ່ມະຕິວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນ ໄຫວ ຂອງຄະນະກຳມະການຍຸ ຕິທຳ ແລະ ປກຊ-ປກສ, ມະຕິ ວ່າດ້ວຍການຈັດຕັ້ງ ແລະ ການ ເຄື່ອນໄຫວຂອງຄະນະກຳມະ ການເສດຖະກິດ, ແຜນການ ແລະ ການເງິນ, ມະຕິວ່າດ້ວຍ ການຈັດຕັ້ງແລະ ການເຄື່ອນ ໄຫວຂອງຄະນະສະມາຊິກສະ ພາປະຊາຊົນແຂວງ ປະຈຳເຂດ ເລືອກຕັ້ງເມືອງ, ມະຕິວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນ ໄຫວຂອງຄະນະກຳມະການ ວັດທະນະທຳ-ສັງຄົມ ແລະບັນ ດາເຜົ່າ ເຊິ່ງໄດ້ຄັດຈ້ອນເອົາແຕ່ ເນື້ອໃນສຳຄັນໆ ເພື່ອໃຫ້ທຸກ ພາກສ່ວນໄດ້ຮັບຮູ້ເຖິງພາລະບົດ ບາດຂອງ ສພຊ ແລະ ສພຂ ຫລາຍ ຂຶ້ນກວ່າເກົ່າ ທັງໄດ້ພົບປະກັບ ພໍ່ແມ່ປະຊາຊົນໃນຂັ້ນຮາກຖານ ເປັນການເກັບກຳສະພາບ, ຄຳ ຄິດຄຳເຫັນຂອງປະ ຊາຊົນບັນ ດາເຜົ່າ ຕໍ່ວຽກງານການປົກປັກ ຮັກສາ ແລະ ສ້າງສາພັດທະນາ ແຂວງ ກໍຄືບັນດາເມືອງ; ຈາກ ນັ້ນ, ພໍ່ແມ່ປະຊາຊົນກໍໄດ້ສະ ເໜີຄວາມຂັດຂ້ອງໝອງໃຈຈຳ ນວນໜຶ່ງຕື່ມອີກ.

ໂອກາດນີ້, ຄະນະໄດ້ ເຄື່ອນໄຫວຢ້ຽມຢາມຊີວິດການ ເປັນຢູ່ຂອງປະຊາຊົນໃນບາງ ບ້ານ ຂອງເມືອງຕະໂອ້ຍ, ຕຸ້ມ ລານ ທັງໄດ້ມອບເຄື່ອງນຸ່ງຫົ່ມ, ແນວພັນພືດ ໃຫ້ປະຊາຊົນ ລວມມູນຄ່າ 16 ລ້ານກວ່າກີບ.

ການເຄື່ອນໄຫວຄັ້ງນີ້ ໄດ້ຮັບການສະໜັບສະໜູນງົບ ປະມານຈາກໂຄງການເຟັກ (PACE).

(ນາງ ຄັດສອນ ຮຸ່ງສະຫວ່າງ)

ສຸຂະສະບາຍ ຫາຍໂຣຄາ

ສັບພະຄຸນຂອງໝາກເດືອຍ

ໝາກເດືອຍ ເປັນພືດທັນຍາຫານທີ່ເຕັມໄປດ້ວຍສານອາຫານຢ່າງຫລວງຫລາຍ ຄົນຈີນຈຶ່ງນິຍົມຮັບປະທານຢ່າງແຜ່ຫລາຍ ເພາະມີສັບພະຄຸນເປັນຢາອາຍຸວັດທະນະ ແລະ ຊ່ວຍບຳລຸງຮ່າງກາຍໃຫ້ແຂງແຮງ; ພ້ອມນັ້ນ, ຄົນລາວເຮົາກໍນິຍົມເອົາມາເຮັດນ້ຳຫວານ, ນ້ຳໝາກເດືອຍ..... ເພື່ອສຸຂະພາບ ແຕ່ທ່ານຮູ້ບໍ່ວ່າ? ໝາກເດືອຍມີຄຸນປະ�โยດຄືແນວໃດແດ່? ດັ່ງນັ້ນ, ໃນຄໍລຳສຸກສະບາຍຫາຍໂລຄາສະບັບນີ້ເຮົາມີຄຸນສົມບັດຂອງໝາກເດືອຍມານຳສະເໜີໃຫ້ແກ່ບັນດາທ່ານຮັບຮູ້ນຳກັນ.

- ເຮັດໃຫ້ລະບົບຂັບຖ່າຍດີ, ຫລຸດອາການຖອກທ້ອງໄດ້ ເພາະໃນໝາກເດືອຍມີໃຍອາຫານຫລາຍ ຈຶ່ງເຮັດໃຫ້ຂັບຖ່າຍສະດວກ;

- ເຮັດໃຫ້ນອນຫລັບສະບາຍ ເພາະມີກົດອາມິ�โນທີ່ຊ່ວຍກະຕຸ້ນການເຮັດວຽກຂອງຮໍโມນເມລາโทນິນ ເຊິ່ງຊ່ວຍໃຫ້ນອນຫລັບໄດ້ດີ;

- ບຳລຸງສາຍຕາ ວິຕາມິນເອ ໃນໝາກເດືອຍຊ່ວຍເພີ່ມຄວາມສາມາດໃນການເບິ່ງເຫັນໃນບ່ອນທີ່ມີແສງສະຫว่ານໜ້ອຍໃຫ້ຫລາຍຂຶ້ນ ໂດຍສະເພາະຕອນກາງຄືນ;

- ບຳລຸງແຂ້ວ ແລະ ກະດູກ ໃຫ້ແຂງແຮງ ປ້ອງກັນໂລກກະດູກຜ່ອຍ ພ້ອມທັງບຳລຸງເສັ້ນເອັນ ແລະ ຄໍ່ກະດູກນຳອີກ

- ບຳລຸງຜິວເຮັດໃຫ້ຜິວເປັ່ງປັ່ງ ເພາະອຸດົມໄປດ້ວຍວິຕາມິນ ບີ1 ແລະ ບີ2 ຫາກຮັບປະທານເປັນປະຈຳ ຈະຊ່ວຍໃຫ້ຜິວພັນສົດໃສຍິ່ງຂຶ້ນ

- ບຳລຸງໄຂ່ຫລັງ ຊ່ວຍຂັບປັດສະວະ ແລະ ແກ້ອາການເຈັບທ້ອງ ຮັກສາໂລກກະເພາະ ແລະ ລຳໄສ້ ພ້ອມທັງຊ່ວຍຫລຸດຄໍເລດເຕີຣໍໃນເສັ້ນເລືອດນຳອີກ;

- ປ້ອງກັນເຕີນມຶນຊາ ໃນໝາກເດືອຍມີວິນຕາມິນບີຫລາຍ ຈຶ່ງຊ່ວຍແກ້ອາການມຶນຊາ ແລະ ແກ້ອາການກະຕຸກ, ຮ້ອນໃນ ແລະ ອາການລິງຂາວໃນແມ່ຍິງນຳອີກ.

ຂໍ້ມູນຈາກ: www.param9.com

ທັກທາຍ ລະບາຍ

ສຽມຫ້ຽນ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ຄັ່ງພິທີການ)

❄ ***ໜ້ານ***ສີພິມອຽງຈັບຫານໄດ້ລາຍງານໃຫ້ຮູ້ວ່າ: ກະຊວງສາທາລະນະສຸກ ອະນຸມັດໃຫ້ລັດວິສາຫະກິດຜະລິດ***ຢາເລກ 3*** ຜະລິດຢາ***ໂມນບູພິຣາເລຍ*** ເຊິ່ງເປັນຢາເມັດເພື່ອບຳໄຊ້ເຂົ້າໃບການ***ປິ້ນປ້ອພະຍາດໂຄວິດ-19*** ປອງປະຊາລ່ຄວຍເຜົ້າ ຕາມຕິດຂ່າວຜົນງານ ການຜະລິດຢາດີ ເພື່ອປິ້ນປ້ອຈຳກັດເຊື້ອ ປາບໂຄວິດໂຕຮ້າຍ ໃຫ້ໜີໄປໄກຫ່າງ ເພື່ອພ້ອມກັບພັດທະນາສົບສ້າງ ເມືອງບ້ານ ໃຫ້ຮຸ່ງເຮືອ ***ນັ້ນແລ້ວ!***

❄ ***ຍິນ***ດີບ່າ***ອັບນະສອນ ລ່າໄຊ*** ທີ່ໄດ້ນີ້ຫາຍາດສົບ ຕະກຸນ ເປັນບຸດ***ຊາຍຄົບຫ່າວິດ*** ກ່າເບີດໃບຫ້ານອາທິດທີ່ຜ່ານມາ ບ່າໜັກເກືອບວ່າ 3 ກິໂລເຄິ່ງ ***ລິ້ຢ້ຳ***ເປັນຊື່ເອີ້ນນາມສະກຸນພາຍໃນ ***ໄຊສົມບູນ***ເປັນຫລັກ ສະກຸນລານເປັນນາມແທ້ ຂໍ່ໃຫ້ແຂງແຮງກ້ຳ ສົມບູນສູງໃຫຍ່ ***ແພງເວີຍ!*** ເປັນໄສ້ທອງຄ້ອງໄອ້ ສອງໃຈໝັ້ນຊື່ອບິລັນ ***ນັ້ນແລ້ວ!***

❄ ***ສະ***ແດງຄວາມເສຍໃຈບ່າອ້າຍ***ແສງທອງ ຫ່ານະເທລາ*** ກ່ານາທີການ ປກຊ-ປກສ ທີ່ໄດ້ສູນເສຍຜູ້ເປັນ***ນາບດາ*** ໃນອາທິດຜ່ານມາ ເຄີງຄາວລາລັບແລ້ວ ຫລັບສູ່ບີພານ ລະສັງຂານສູ່ສະຫວັນເມືອງຟ້າ ຄວາມດີນາບດາສ້າງ ຂ່ອຍບ່າຫາງອົບຍານສົ່ງ ສອງສະຫວັນບ່ອນກ້ວ້ານ ເມືອງຟ້າບ່ອນສູງ ***ພຸ້ນເນີ!***

ສາລາກະວີ

ຂໍ້ຮ້ອງຊ່ວງໂຄວິດ

ໂດຍ: ລູກທາດສາມປາງ

❄ ສັງຄົມເຮຮຸ່ມຮ້ອນ ຮົນຮ່ຳຮອນອຸກ
ທຸກທັ່ງໂທມຊີຜານ ສັ່ນເຟືອນນອງລົ້ນ
ຫລາຍຄົນເຄືອງຄອນຢ້ານ ຄືນວັນເອົ້າອັ່ງ
ໂຄວິດຊູນຜ່ານ້ຳ ສັງເວີຍມ້ວນມັບຕາຍ

❄ ຫລາຍຄົນເພີ່ນທ່ຽວມົ້ວ ເລີຍລ່ວງຝົນກົດ
ຂີ່ລົດແຊວນັນເນືອງ ລົ່ນເລີງເນົ່າບ້ຳ
ລົນສຸລາວົງເຫລົ້ຳ ມ້ວເນົ່າແມ້ງມ່ວນ
ຫລາຍໜູ່ມວນລົ່ນດ້ານ ຝົນດົ້ວ່າບໍ່ຟັງ...ໜ່ານເດ

❄ ສັງວ່າຊານຄື່ນກ້ອງ ຄະນອງມ່ວນລົ້ມຕົນ
ຄົນທັງເມືອງເຂົ້າກ້ວ ສັ່ນເຊັນຮົນຮ້ອນ
ກັກຕົວນອນໃນຢ້ຳວ ເນົ່າເຮືອນຢົ້ງຢູ່
ຫລາຍກຸ່ມຄົນໜູ່ດົ້ ຫົວກ້ຳແກ່ນບໍ່ຟັງ...ບໍ່ດີແລ້ວ

❄ ສັງບໍ່ແຂງເຂື່ອນເຂັ້ມ ຂຶງເຄັ່ງກັກຕົວ
ຢ່າທ່ຽວມ້ວເນົ່າຝົນ ຮ່ວມມືເຖິງຖ້ວນ
ຊວ້ານຊ່ວຍຊູພຽງພ້ອມ ສະເໜີດອມໂດຍດັ່ງ
ຕ້ານໂຄວິດຈົ່ງຈັ່ງ ມັນຈົ່ງຫາຍຫ່ານດ້ານ ລາວນີ້ຢູ່ເຢັນ...ເຈົ້າເອີຍ!

ເບີໂທສຸກເສີນ

0 ຕຳຫລວດ

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

0 ຫນ່ວຍກູ້ໄພ

-ສະມາຄົມອາສາກູ້ໄພນະຄອນຫລວງ 1624
- ຫນ່ວຍກູ້ໄພມູນນິທິຊ່ວຍເຫລືອຄົນທຸກຍາກ 1623
- ຫນ່ວຍຊ່ວຍເຫລືອຜູ້ປະສົບໄພ ອົງການກາແດງ 1625
- ມູນນິທິ ກູ້ໄພ ນາຄາ 1513

ຂອບຍິ້ມ

ທ້ວນ

ເລື່ອງ: ຄິຊິ້ວອກມາແລ້ວ

ນີ້ຜົວ-ເມຍຄູ່ໜຶ່ງກ່າລັງນັ່ງລົມກັນ

ຜົວ: ເຈົ້າຈີ້ໄດ້ບໍ? ເມື່ອ 10 ປີກ່ອນ ຕອນທີ່ຂ້ອຍລັກໄປຫລິ້ນບ່າເຈົ້າ ແລ້ວພ່ແມ່ເຈົ້າຈັບໄດ້ ພ່ເຈົ້າຖາມຂ້ອຍວ່າ: "ຊິແຕ່ງດອງຫລືຊິຕິດຄຸກ"

ເມຍ: ໂອ້..... ຈີ ຂ້ອຍຈີ້ໄດ້ດີເລີຍແຫລະ

ຜົວ: ນີ້ບັ້ນ, ຂ້ອຍຕອບພ່ເຈົ້າວ່າ ແຕ່ງດອງ

ເມຍ: ແລ້ວນັ້ນເປັນອີຫຍັງ?!!!!

ຜົວ: ຖ້ານີ້ບັ້ນຂ້ອຍເລືອກຕິດຄຸກ ປານນີ້ກະຄິຊິພົ້ນໂທດ ອອກມາແລ້ວ

ເມຍ: !!!!!!!!

ຄະຕິເຕືອນໃຈ

ດວກຫຍ້າ

ຄວາມດີ ບໍ່ມີມາດຕະຖານ ບໍ່ມີເພດານ ບໍ່ມີພື້ນ
ບໍ່ເລີ່ມບໍ່ຕົ້ນ ແຕ່ຍືນບານເທົ້າອະສົ່ງໄສ

ກົດໝາຍ ว่าด้ยการลิดไฟ

ຕໍ່ຈາກສະບັບກ່ອນ...

ມາດຕາ 59 ສະຖານີຂົນສົ່ງສິນຄ້າ

ສະຖານີຂົນສົ່ງສິນຄ້າ ຕ້ອງມີສະຖານທີ່ຈອດ, ຜັກ, ສັບປ່ຽນ, ຫຼີກ, ຜ່ານຂະບວນລົດໄຟ, ຈັດຕູ້, ບັນ ທຸກ, ຄ່ຽນຖ່າຍ, ຮັບສົ່ງ, ເກັບຮັກສາສິນຄ້າ, ກວດກາເຕັກນິກ, ຫ້ອງການ, ລະບົບບໍລິການຂໍ້ມູນ ຂ່າວສານ, ເດີນ,ລານຈອດ ລົດ, ທາງເຂົ້າຫາສະຖານີ, ສາງສິນຄ້າ, ລານວາງຕູ້ສິນຄ້າ, ຫ້ອງບັນຊາຄວບຄຸມ ແລະ ຫ້ອງເກັບມ້ຽນອຸ ປະກອນ.

ການກໍ່ສ້າງສະຖານີຂົນສົ່ງສິນຄ້າ ຕ້ອງໃຫ້ສອດຄ່ອງກັບແຜນຜັງຕົວ ເມືອງ ແລະ ລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະ ຊວງອື່ນທີ່ກ່ຽວຂ້ອງ.

ມາດຕາ 60 ອູ່ສ້ອມແປງລົດໄຟ

ອູ່ສ້ອມແປງລົດໄຟ ຕ້ອງມີສະຖານທີ່ສ້ອມແປງຫົວຈັກ, ຕູ້ລົດໄຟ, ລະ ບົບຫ້າມລໍ້, ໄຟຟ້າ, ໄຟສັນຍານ,ໂທລະຄົມມະນາຄົມ ແລະ ການສື່ສານ, ນ້ຳ ປະປາ ແລະ ສຸຂານາໄມ, ຫ້ອງທົດສອບ, ໂຮງຊ່ຽນ, ສາງ, ວັດຖຸປະກອນ, ເຄື່ອງອະໄຫຼ່ປ່ຽນຖ່າຍ, ລານຈອດລົດໄຟ, ຫ້ອງພົ່ນສີ ແລະ ອື່ນໆ.

ການກໍ່ສ້າງອູ່ສ້ອມແປງລົດໄຟ ຕ້ອງໃຫ້ສອດຄ່ອງກັບແຜນຜັງຕົວເມືອງ ແລະ ລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງອື່ນທີ່ ກ່ຽວຂ້ອງ.

ພາກທີ V
ລົດໄຟ, ພະນັກງານລົດໄຟ ແລະ ລະບຽບການແລ່ນລົດໄຟ
ໝວດທີ 1
ລົດໄຟ

ມາດຕາ 61 ລົດໄຟ

ລົດໄຟ ແມ່ນ ຍານພາຫະນະທີ່ເປັນຕູ້ເກາະກັນເປັນຂະບວນ ຊຶ່ງຂັບ ເຄື່ອນດ້ວຍຫົວຈັກ, ແລ່ນໄປຕາມລາງເພື່ອຂົນສົ່ງຜູ້ໂດຍສານ ແລະ ສິນຄ້າຈາກ ຕົ້ນທາງໄປ ຫາ ປາຍທາງເປົ້າໝາຍ.

ລົດໄຟ ປະກອບດ້ວຍ ຫົວຈັກລົດໄຟ, ຕູ້ລົດໄຟ, ວັດຖຸປະກອນ ແລະ ສິ່ງປະກອບອື່ນ.

ມາດຕາ 62 ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ລົດໄຟ

ການນຳເຂົ້າລົດໄຟ, ຫົວຈັກ, ຕູ້ລົດໄຟ ຕ້ອງປະກອບເອກະສານໃນການ ນຳເຂົ້າ ແລະ ເອກະສານຢັ້ງຢືນຄຸນນະພາບຢ່າງຖືກຕ້ອງ ແລະ ຄົບຖ້ວນຕາມມາດ ຕະຖານເຕັກນິກ ແລະ ຕ້ອງຂໍອະນຸຍາດນຳກະຊວງໂຍທາທິການ ແລະ ຂົນສົ່ງ.

ມາດຕາ 63 ການກວດກາເຕັກນິກລົດໄຟ

ກ່ອນຂະບວນລົດໄຟຈະແລ່ນອອກຈາກສະຖານີຕົ້ນທາງ, ພະນັກງານ ປະຕິບັດການຢູ່ສະຖານີລົດໄຟຕ້ອງກວດກາລະບົບຫົວຈັກ, ຊ່ວງລ່າງ, ລໍ້ເລື່ອນ, ໄຟຟ້າ, ຫ້າມລໍ້, ຕູ້ລົດໄຟ, ເກາະພ່ວງ, ກັບດຳ ແລະ ອື່ນໆ ໃຫ້ຖືກ ຕ້ອງຕາມ ມາດຕະຖານເຕັກນິກທີ່ກຳນົດໄວ້ຢ່າງເຂັ້ມງວດ.

ມາດຕາ 64 ການຂຶ້ນທະບຽນ

ລົດໄຟ, ຫົວຈັກ, ຕູ້ລົດໄຟ, ວັດຖຸປະກອນ ແລະ ສິ່ງປະກອບສຳລັບການ ຂົນສົ່ງຜູ້ໂດຍສານ ແລະ ສິນຄ້າ ຕ້ອງຂຶ້ນທະບຽນ ແລະ ຕິດປ້າຍໃຫ້ຖືກຕ້ອງ ຕາມກົດໝາຍ.

ມາດຕາ 65 ເຄື່ອງຫ້າມລໍ້, ເຄື່ອງເກາະຫົວຈັກລົດໄຟ ແລະ ຕູ້ລົດໄຟ

ລົດໄຟ ຕ້ອງມີເຄື່ອງຫ້າມລໍ້ອັດຕະໂນມັດ ແລະ ເຄື່ອງຫ້າມລໍ້ດ້ວຍມື ຊຶ່ງຕ້ອງໄດ້ຮັບການກວດກາການໃຊ້ງານຢ່າງເປັນປົກກະຕິ ເພື່ອຮັບປະກັນ ຄວາມປອດໄພ.

ເຄື່ອງຫ້າມລໍ້ສຸກເສີນແລະເຄື່ອງວັດແທກຄວາມດັນດ້ວຍປະຕູລົມຕ້ອງ ຕິດຕັ້ງຢູ່ຕູ້ຜູ້ໂດຍສານ ແລະຫ້ອງເຮັດວຽກຂອງຫົວໜ້າຂະບວນລົດໄຟ ຊຶ່ງຕ້ອງ ໄດ້ຮັບການກວດກາການໃຊ້ງານເປັນແຕ່ລະໄລຍະ ພ້ອມທັງໝົບກົ່ວ.

ເຄື່ອງເກາະຫົວຈັກລົດໄຟ ກັບຕູ້ລົດໄຟ ແລະ ຕູ້ລົດໄຟກັບຕູ້ລົດໄຟ ຕ້ອງ ເກາະກັນໃຫ້ຖືກຕ້ອງຕາມແບບ, ມາດຕະຖານ ແລະ ປະເພດຂອງຫົວຈັກ ແລະ ຕູ້ລົດໄຟ.

ມາດຕາ 66 ອຸປະກອນທີ່ນຳໃຊ້ໃນລົດໄຟ

ລົດໄຟ ຕ້ອງປະກອບ ແລະ ຕິດຕັ້ງອຸປະກອນ ດັ່ງນີ້:

1. ເຄື່ອງວັດແທກ, ເຄື່ອງບັນທຶກຄວາມໄວ ແລະ ຂໍ້ມູນ ຂ່າວສານ ກ່ຽວ ກັບການເຄື່ອນໄຫວຂອງລົດໄຟ;
2. ຄ້ອນທຸບສຸກເສີນ, ອຸປະກອນດັບເພີງ, ເຄື່ອງມືສ້ອມແປງ, ເຄື່ອງສັນ ຍານທີ່ຖືຕິດຕົວໄດ້, ເຄື່ອງຊ່ວຍຫາຍໃຈ ແລະ ຖົງຢາປະຖົມພະຍາບານ;
3. ເຄື່ອງເຕືອນໄຟ ເພື່ອໃຫ້ຜູ້ຂັບຂີ່ລົດໄຟມີຄວາມຕື່ນຕົວຢູ່ສະເໝີໃນ ເວລາຂັບລົດໄຟ;
4. ຫ້ອງເຮັດວຽກຂອງຜູ້ຂັບຂີ່ລົດໄຟ ຊຶ່ງຕ້ອງຕິດຕັ້ງໜ່ວຍວັດແທກ ຄວາມໄວ ແລະ ເຄື່ອງສື່ສານລະຫว่ານ ຫົວໜ້າຂະບວນລົດໄຟກັບຜູ້ຂັບຂີ່ລົດໄຟ;
5. ຕູ້ຜູ້ໂດຍສານ ຊຶ່ງຕ້ອງຕິດຕັ້ງລະບົບແສງສະຫว่ານ, ຄວາມເຢັນ, ລະບາຍອາກາດ, ສຸຂາພິບານ ແລະ ສິ່ງອຳນວຍຄວາມສະດວກສຳລັບຄົນພິການ, ຜູ້ເສຍອົງຄະ, ນັກບວດ, ແມ່ມານ, ເດັກນ້ອຍ, ຜູ້ເຖົ້າ ຍົກເວັ້ນລະບົບສຸຂາພິບານ ສຳລັບຕູ້ຜູ້ໂດຍສານທີ່ບໍລິການໃນຕົວເມືອງ;
6. ອຸປະກອນເຕັກນິກອື່ນ.

ມາດຕາ 67 ຂໍ້ມູນ ຂ່າວສານ ແລະ ຄຳແນະນຳ ສຳລັບຜູ້ໂດຍສານ

ຕູ້ລົດໄຟ ຕ້ອງມີຂໍ້ມູນ ຂ່າວສານ ແລະ ຄຳແນະນຳ ເພື່ອອຳນວຍຄວາມ ສະດວກ ໃຫ້ແກ່ຜູ້ໂດຍສານເປັນຕົ້ນ ເລກໝາຍຕູ້, ເລກໝາຍຕັ່ງນັ່ງ ຫຼື ຕຽງ ນອນ, ຕາຕະລາງສາຍທາງ, ແຜນການແລ່ນລົດໄຟ, ຈຳນວນ ແລະ ຊື່ສະຖານີ, ວິທີການ ແລະ ມາດຕະການ ໃນການແກ້ໄຂເມື່ອເກີດອັກຄີໄຟ ຫຼື ອຸບປະຕິເຫດ.

ຂໍ້ມູນ ຂ່າວສານ ແລະ ຄຳແນະນຳ ຕ້ອງມີຄວາມຊັດເຈນ, ໂດດເດັ່ນ, ເຂົ້າໃຈງ່ຳຍ ແລະ ອ່ານງ່ຳຍ.

ມາດຕາ 68 ການປະກັນໄພລົດໄຟ

ພາຫະນະທຸກຊະນິດກ່ຽວກັບການຂົນສົ່ງທາງລົດໄຟຕ້ອງມີການປະກັນ ໄພ ຕາມກົດໝາຍว่าด้ວຍການປະກັນໄພ.

ໝວດທີ 2
ພະນັກງານລົດໄຟ

ມາດຕາ 69 ພະນັກງານລົດໄຟ

ພະນັກງານລົດໄຟ ປະກອບດ້ວຍ:

1. ພະນັກງານປະຕິບັດການແລ່ນລົດໄຟ;
2. ເຈົ້າໜ້າທີ່ລົດໄຟ.

ມາດຕາ 70 ພະນັກງານປະຕິບັດການແລ່ນລົດໄຟ

ພະນັກງານປະຕິບັດການແລ່ນລົດໄຟ ມີ ດັ່ງນີ້:

1. ຫົວໜ້າສູນບັນຊາການແລ່ນລົດໄຟ;
2. ຫົວໜ້າສະຖານີ;
3. ພະນັກງານຂັບລົດໄຟ;
4. ພະນັກງານປະຕິບັດການຢູ່ສະຖານີລົດໄຟ;
5. ພະນັກງານເກາະຫົວຈັກ ແລະ ຕູ້ລົດໄຟ;
6. ພະນັກງານຄວບຄຸມການສັບປ່ຽນລາງລົດໄຟ;
7. ພະນັກງານຄວບຄຸມການແລ່ນລົດໄຟ;
8. ພະນັກງານຄວບຄຸມຂະບວນລົດໄຟ;
9. ພະນັກງານກວດກາອຸໂມງ, ລາງ ແລະ ຂົວລົດໄຟ;
10. ພະນັກງານເຝົ້າຍາມອຸໂມງ, ຂົວ ແລະ ທາງຄົບ.

ນອກຈາກນີ້ ຍັງມີພະນັກງານຮັກສາຄວາມປອດໄພ ແລະ ພະນັກງານ ບໍລິການອື່ນ ທີ່ປົນອ້ອມວຽກງານປະຕິບັດການແລ່ນລົດໄຟ.

ມາດຕະຖານແລະເງື່ອນໄຂຂອງພະນັກງານແຕ່ລະປະເພດ ໄດ້ກຳນົດໄວ້ ໃນລະບຽບການຕ່ າງຫາກ.

ມາດຕາ 71 ຫົວໜ້າສູນບັນຊາການແລ່ນລົດໄຟ

ຫົວໜ້າສູນບັນຊາການແລ່ນລົດໄຟ ມີຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້:

1. ຄວບຄຸມ, ຕິດຕາມ, ສັ່ງການ ແລະ ເລັ່ງລັດການແລ່ນລົດໄຟ ເພື່ອ ໃຫ້ໄປຕາມກຳນົດເວລາການແລ່ນລົດໄຟ ຫຼື ປະກາດແລ່ນລົດໄຟ;
2. ຈັດການ ຫຼື ສັ່ງການຫຼີກຂະບວນລົດໄຟ ຫຼື ສັ່ງການປ່ຽນທາງແລ່ນ ຂອງຂະບວນລົດໄຟ ຫຼື ສັ່ງຢຸດຂະ ບວນລົດໄຟ;
3. ຮັບການລາຍງານຂອງພະນັກງານຄວບຄຸມການແລ່ນລົດໄຟໃນແຕ່ ລະເຂດ;
4. ຮັບຜິດຊອບຕໍ່ທຸກຄຳສັ່ງຂອງຕົນຕາມກົດໝາຍ;
5. ພົວພັນປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການບັນ ຊາການແລ່ນລົດໄຟ.

ມາດຕາ 72 ຫົວໜ້າສະຖານີ

ຫົວໜ້າສະຖານີ ຕ້ອງຮັບຜິດຊອບກິດຈະການທັງໝົດ ໃນຂອບເຂດ ສະຖານີຂອງຕົນ ຊຶ່ງມີວຽກຕົ້ນຕໍ ດັ່ງນີ້:

1. ຄວບຄຸມວຽກທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຈັດຕັ້ງປະຕິ ບັດຕາມຄຳສັ່ງ ແລະ ລະບຽບການຕ່ າງໆ ທີ່ໄດ້ກຳນົດໄວ້ຢ່ າງເຂັ້ມງວດ ເພື່ອປ້ອງ ກັນຄວາມປອດໄພ ແລະ ຮັກສາຄວາມປອດໄພ;
2. ອະນຸຍາດໃຫ້ຂະບວນລົດໄຟແລ່ນເຂົ້ າ ອອກ ຕາມລະບຽບການ ແລ່ນລົດໄຟ ພາຍໃນເຂດສະຖານີຂອງຕົນຢ່ ານເຂັ້ມງວດ;
3. ຮັບຜິດຊອບການເກັບລາຍຮັບທຸກປະເພດ ທີ່ກ່ ຽວຂ້ ອງກັ ບວຽກ ຂອງຕົນໃຫ້ຖືກຕ້ ອງ, ຄົບຖ້ ວນ ແລະ ມີຄວາມປອດໄພແລ້ ວສົ່ ງມອບລາຍຮັ ບ ດັ່ ງກ່ າວ ໃຫ້ ໜ່ ວຍງານທີ່ ກ່ ຽວຂ້ ອງຕາມກົ ດໝາ ຍຢ່ ານເຂັ້ ມງວດ;
4. ຂຶ້ ນແຜນຝຶ ກອົ ບຮົ ມພະນັ ກງານທີ່ ປະ ຈຳ ການ ໃຫ້ ມີ ຄ ວ າ ມ ຮູ້ ແ ລ ະ ຄ ວ າ ມ ສ າ ມ າ ດ ໃ ນ ກ ານ ປ ະ ຕິ ບ ັ ດ ຫ ນ້ າ ທ ີ ່ ວ ຽ ກ ງ ານ ຂ ອ ງ ຕ ົ ນ ໃ ຫ້ ມ ີ ຄ ຸ ນ ນ ະ ພ າ ບ ສ ູ ງ ;

ໃນກໍ ລະນີ ເກີ ດມີ ຄ ວ າ ມ ຜ ິ ດ ພ າ ດ, ຄ ວ າ ມ ເ ສ ຍ ຫ າ ຍ ຫ ຼ ື ອ ຸ ບ ປ ະ ຕ ິ ເ ຫ ດ, ຫ ົ ວ ໜ້ າ ສ ະ ຖ ານ ີ ຕ້ ອ ງ ຮ ັ ບ ຜ ິ ດ ຊ ອ ບ ຕ່ ໍ ເ ຫ ດ ການ ເ ຫ ຼ ົ່ ານ ັ້ ນ ຈ ົ ນ ກ ວ່ າ ມ ີ ຜ ົ ນ ຂ ອ ງ ການ ສ ືບ ສ ວ ນ-ສ ອ ບ ສ ວ ນ ວ່ າ ບ ໍ່ ແ ມ ່ ນ ຄ ວ າ ມ ຜ ິ ດ ຂ ອ ງ ຕ ົ ນ.

ມາດຕາ 73 ພະນັກງານຂັບລົດໄຟ

ພະນັ ກ ງານ ຂ ັ ບ ລ ົ ດ ໄ ຟ ມ ີ ຄ ວ າ ມ ຮ ັ ບ ຜ ິ ດ ຊ ອ ບ ຕ ົ ້ ນ ຕ ໍ ດ ັ ່ ງ ນ ີ້ :

1. ຕ້ ອ ງ ກ ວ ດ ກ າ ເ ອ ກ ະ ສ ານ, ໃ ບ ຢ ັ ້ ງ ຢ ືນ ລ ະ ບ ົ ບ ເ ຕ ັ ກ ນ ິ ກ ແ ລ ະ ໄ ຟ ສ ັ ນ ຍ ານ ຂ ອ ງ ລ ົ ດ ໄ ຟ, ໃ ບ ອ ະ ນ ຸ ຍ າ ດ ໃ ຫ້ ຢ ຸ ດ ຫ ຼ ື ຫ ຼ ີ ກ ຂ ະ ບ ວ ນ ລ ົ ດ ໄ ຟ ຕ າ ມ ແ ຜ ນ ການ ແ ລ່ ນ ລ ົ ດ ໄ ຟ;
2. ປ ະ ຕ ິ ບ ັ ດ ຕ າ ມ ຄ ຳ ສ ັ ່ ງ ປ ່ ອ ຍ ຂ ະ ບ ວ ນ ລ ົ ດ ໄ ຟ ຂ ອ ງ ຫ ົ ວ ໜ້ າ ສ ະ ຖ ານ ີ ແ ລ ະ ພ ະ ນ ັ ກ ງ ານ ຄ ວ ບ ຄ ຸ ມ ຂ ະ ບ ວ ນ ລ ົ ດ ໄ ຟ ກ ່ ອ ນ ຂ ະ ບ ວ ນ ລ ົ ດ ໄ ຟ ຈ ະ ແ ລ່ ນ ອ ອ ກ ຈ າ ກ ສ ະ ຖ ານ ີ ລ ົ ດ ໄ ຟ;
3. ຄ ວ ບ ຄ ຸ ມ ຫ ົ ວ ຈ ັ ກ ລ ົ ດ ໄ ຟ ໃ ຫ້ ແ ລ່ ນ ໄ ດ້ ຢ ່ າ ງ ເ ປ ັ ນ ປ ົ ກ ກ ະ ຕ ິ ແ ລ ະ ຮ ັ ບ ປ ະ ກ ັ ນ ຄ ວ າ ມ ປ ອ ດ ໄ ພ ພ ້ ອ ມ ທ ັ ງ ຮ ັ ກ ສ າ ຄ ວ າ ມ ໄ ວ ໃ ຫ້ ຖ ື ກ ຕ ້ ອ ງ ຕ າ ມ ແ ຜ ນ ການ ແ ລ່ ນ ລ ົ ດ ໄ ຟ;
4. ປ ະ ຕ ິ ເ ສ ດ ບ ໍ ່ ແ ລ່ ນ ລ ົ ດ ໄ ຟ ເ ມ ື່ ອ ເ ຫ ັ ນ ວ່ າ ບ ໍ ່ ຮ ັ ບ ປ ະ ກ ັ ນ ຄ ວ າ ມ ປ ອ ດ ໄ ພ ແ ລ ະ ລ າ ຍ ງ ານ ດ ່ ວ ນ ໃ ຫ້ ພ ະ ນ ັ ກ ງ ານ ຄ ວ ບ ຄ ຸ ມ ຂ ະ ບ ວ ນ ລ ົ ດ ໄ ຟ;
5. ຕ້ ອ ງ ສ ັ ງ ເ ກ ດ ສ ະ ພ າ ບ ການ ແ ລະ ປ ະ ຕ ິ ບ ັ ດ ຕ າ ມ ກ ົ ດ ລ ະ ບ ຽ ບ ຈ ະ ລ າ ຈ ອ ນ, ລ ະ ບ ົ ບ ໂ ທ ລ ະ ຄ ົ ມ ມ ະ ນ າ ຄ ົ ມ ແ ລ ະ ການ ສ ື ສ ານ ຕ າ ມ ສ າ ຍ ທ າ ງ ລ ົ ດ ໄ ຟ ຢ ່ າ ງ ເ ຂ ັ ້ ມ ງ ວ ດ.

ອ່ານຕໍ່ສະບັບຫນ້າ...

ເຂົ້າໃຈກົດໝາຍ

ຄັດໂດຍ: ສ.ສາຍນ້ຳທາ

ກົດໝາຍว่าด้ວຍທະບຽນສານ (ສະບັບປັບປຸງ)

3. ຜູ້ຂໍຍື່ງຢືນ ໝາຍເຖິງບຸກຄົນ, ນິຕິບຸກຄົນ ຫລື ການຈັດ ຕັ້ງທີ່ເອົາສັນຍາ ຫລື ເອກະສານອື່ນ ມາຂໍຍື່ງຢືນນຳນາຍທະບຽນສານ;

4. ເອກະສານສະບັບຕົ້ນ ໝາຍເຖິງເອກະສານທີ່ໄດ້ສ້າງຂຶ້ນ ເປັນຄັ້ງທຳອິດ ແລະ ມີຜົນທາງດ້ານກົດໝາຍ;

5. ເອກະສານສຳເນົາ ໝາຍເຖິງເອກະສານສະບັບທີ່ໄດ້ກ່ າຍ, ພິມ ຫລື ອັດ ຕາມເອກະສານສະບັບຕົ້ນ ເພື່ອໃຫ້ເອກະສານສຳເນົາ ມີຜົນທາງດ້ານກົດໝາຍ ຕ້ ອງໄດ້ຮັ ບການ ຢັ້ ງ ຢືນ ຢ ່ ານ ຖ ືກ ຕ ້ ອ ງ.

ອ່ານຕໍ່ສະບັບໜ້າ

ຕໍ່ຈາກໜ້າ 3...

ຫລວງປີສາມັກຄີມິດຕະພາບ ລາວ-ຫວຽດນາມ;

4) ຂຶ້ນແຜນການຕ້ອນ ຮັບຄະນະຜູ້ແທນຂັ້ນສູງສະພາ ແຫ່ງຊາດ ບັນດາປະເທດຈຳ ນວນໜຶ່ງ ທີ່ມີຈຸດປະສົງມາ ເຄື່ອນໄຫວ ແລະ ຢ້ ຽ ມ ຢ າ ມ ສ ປ ປ ລ າ ວ; ຕ້ ອ ນ ຮ ັ ບ ການ ເ ຂ ົ້ າ ຢ້ ຽ ມ ຂ ່ ຳ ນ ັ ບ ຂ ອ ງ ທ ູ ຕ ານ ຸ ທ ູ ດ ປ ະ ຈ ຳ ຢ ູ ່ ສ ປ ປ ລ າ ວ, ຜ ູ ້ ຕ າ ງ ໜ້ າ ອ ົ ງ ການ ຈ ັ ດ ຕ ັ ້ ງ ສ າ ກ ົ ນ ແ ລ ະ ແ ຂ ກ ຕ ່ າ ງ ປ ະ ເ ທ ດ ຕ າ ມ ການ ສ ະ ເ ໜ ີ.

ພ າ ກ ທ ີ III: ມ າ ດ ຕ ະ ການ ຈ ັ ດ ຕ ັ ້ ງ ປ ະ ຕ ິ ບ ັ ດ

ເ ພ ື ່ ອ ຮ ັ ບ ປ ະ ກ ັ ນ ການ ຈ ັ ດ ຕ ັ ້ ງ ປ ະ ຕ ິ ບ ັ ດ ແ ຜ ນ ການ ເ ຄ ື່ ອ ນ ໄ ຫ ວ ວ ຽ ກ ງ ານ ປ ະ ຈ ຳ ປ ີ 2022 ໄ ດ ້ ຮ ັ ບ ຜ ົ ນ ສ ຳ ເ ລ ັ ດ ເ ປ ັ ນ ຢ ່ າ ງ ດ ີ, ສ ພ ຊ ກ ຳ ນ ົ ດ ມ າ ດ ຕ ະ ການ ຕ ົ ນ ຕ ໍ ດ ັ ່ ງ ນ ີ້ :

1) ກ ຳ ມ າ ທ ິ ການ ກ ົ ດ ໝ າ ຍ ເ ປ ັ ນ ເ ຈ ົ້ າ ການ ສ ົ ມ ທ ົ ບ ກ ັ ບ ບ ັ ນ ດ າ ກ ຳ ມ າ ທ ິ ການ, ກ ະ ຊ ວ ງ, ອ ົ ງ ການ ແ ຕ່ ຫ ົ ວ ທ ິ ໃ ນ ການ ສ ້ າ ງ ແ ລ ະ ປ ັ ບ ປ ຸ ງ ກ ົ ດ ໝ າ ຍ ຕ າ ມ ແ ຜ ນ ການ ປ ີ 2022 ວ າ ງ ໄ ວ ້ ;

2) ຍ ົ ກ ສ ູ ງ ຄ ວ າ ມ ຮ ັ ບ ຜ ິ ດ ຊ ອ ບ ໃ ນ ການ ຄ ົ ້ ນ ຄ ວ ້ າ, ວ ິ ເ ຄ າ ະ ວ ິ ໄ ຈ, ເ ກ ັ ບ ກ ຳ ຂ ໍ້ ມ ູ ນ ໃ ຫ ້ ລ ະ ອ ຽ ດ ເ ລ ິ ກ ເ ຊ ິ ງ ໃ ນ ການ ຕ ິ ກ ລ ົ ງ ບ ັ ນ ຫ າ ສ ຳ ຄ ັ ນ ພ ື ້ ນ ຖ ານ ຂ ອ ງ ປ ະ ເ ທ ດ ຊ າ ດ, ການ ເ ຄ ື່ ອ ນ ໄ ຫ ວ ຂ ອ ງ ຄ ປ ຈ.ສ ພ ຊ ແ ລ ະ ກ ົ ງ ຈ ັ ກ ການ ຈ ັ ດ ຕ ັ ້ ງ ຂ ອ ງ ສ ພ ຊ; ເ ອ າ ໃ ຈ ໃ ສ ່ ປ ະ ສ ານ ສ ົ ມ ທ ົ ບ ກ ັ ບ ລ ັ ດ ຖ ະ ບ ານ, ອ ົ ງ ການ ກ ວ ດ ກ າ ແ ຫ ່ ງ ລ ັ ດ, ອ ົ ງ ການ ກ ວ ດ ສ ອ ບ ແ ຫ ່ ງ ລ ັ ດ, ສ ານ ປ ະ ຊ າ ຊ ົ ນ ສ ູ ງ ສ ຸ ດ, ອ ົ ງ ການ ໄ ອ ຍ ະ ການ ປ ະ ຊ າ ຊ ົ ນ ສ ູ ງ ສ ຸ ດ ແ ລ ະ ພ າ ກ ສ ່ ວ ນ ກ ່ ຽ ວ ຂ ້ ອ ງ ເ ພ ື ່ ອ ປ ຶ ກ ສ າ ຫ າ ລ ື ສ ້ າ ງ ຄ ວ າ ມ ເ ອ ກ ະ ພ າ ບ ດ ້ ານ ເ ນ ື ້ ອ ໃ ນ ຕ ່ າ ງ ໆ ກ ່ ອ ນ ຈ ະ ນ ຳ ເ ຂ ົ້ າ ພ ິ ຈ າ ລ ະ ນ າ ຢ ູ ່ ກ ອ ງ ປ ະ ຊ ຸ ມ ສ ພ ຊ, ກ ອ ງ ປ ະ ຊ ຸ ມ ຄ ປ ຈ. ສ ພ ຊ; ຄ ະ ນ ະ ສ ະ ມ າ ຊ ິ ກ ສ ະ ພ າ ແ ຫ ່ ງ ຊ າ ດ ປ ະ ຈ ຳ ເ ຂ ດ ເ ລ ືອ ກ ຕ ັ ້ ງ ເ ປ ັ ນ ເ ຈ ົ້ າ ການ ເ ກ ັ ບ ກ ຳ ຂ ໍ້ ມ ູ ນ ແ ລ ະ ສ ະ ໜ ອ ງ ໃ ຫ ້ ກ ົ ງ ຈ ັ ກ ຂ ອ ງ ສ ພ ຊ ເ ພ ື ່ ອ ເ ປ ັ ນ ບ ່ ອ ນ ອ ິ ງ ໃ ນ ການ ຄ ົ ້ ນ ຄ ວ ້ າ, ພ ິ ຈ າ ລ ະ ນ າ ຕ ິ ກ ລ ົ ງ ບ ັ ນ ຫ າ ໃ ຫ ້ ມ ີ ຄ ຸ ນ ນ ະ ພ າ ບ ແ ລ ະ ທ ັ ນ ການ;

3) ຄ ປ ຈ.ສ ພ ຊ, ບ ັ ນ ດ າ ກ ຳ ມ າ ທ ິ ການ, ຄ ະ ນ ະ ສ ະ ມ າ ຊ ິ ກ ສ ະ ພ າ ແ ຫ ່ ງ ຊ າ ດ ປ ະ ຈ ຳ ເ ຂ ດ ເ ລ ືອ ກ ຕ ັ ້ ງ ແ ລ ະ ສ ະ ມ າ ຊ ິ ກ ສ ະ ພ າ ແ ຫ ່ ງ ຊ າ ດ ສ ້ າ ງ ແ ຜ ນ ການ ຕ ິ ດ ຕ າ ມ ກ ວ ດ ກ າ ຂ ອ ງ ຕ ົ ນ ຢ ່ າ ງ ມ ີ ຈ ຸ ດ ສ ຸ ມ ໂ ດ ຍ ສ ະ ເ ພ າ ະ ແ ມ ່ ນ ແ ຜ ນ ການ ເ ຜ ີ ຍ ແ ຜ ່ ຜ ົ ນ ສ ຳ ເ ລ ັ ດ ກ ອ ງ ປ ະ ຊ ຸ ມ ສ ະ ໄ ໝ ສ າ ມ ັ ນ ຂ ອ ງ ສ ພ ຊ ແ ລ ະ ກ ອ ງ ປ ະ ຊ ຸ ມ ສ ະ ໄ ໝ ສ າ ມ ັ ນ ຂ ອ ງ ສ ະ ພ າ ປ ະ ຊ າ ຊ ົ ນ ຂ ັ ້ ນ ແ ຂ ວ ງ; ກ ຳ ນ ົ ດ ຫ ົ ວ ຂ ໍ້, ຂ ັ ້ ນ ຕ ອ ນ ວ ິ ທ ີ ການ ຕ ິ ດ ຕ າ ມ ກ ວ ດ ກ າ ໃ ຫ ້ ມ ີ ຄ ວ າ ມ ຈ ະ ແ ຈ ້ ງ, ຄ ົ ້ ນ ຄ ວ ້ າ ກ ຳ ແ ໜ ້ ນ ເ ນ ື ້ ອ ໃ ນ ຂ ອ ງ ກ ົ ດ ໝ າ ຍ, ປ ະ ສ ານ ສ ົ ມ ທ ົ ບ ກ ັ ບ ພ າ ກ ສ ່ ວ ນ ຕ ່ າ ງ ໆ, ສ ະ ຫ ລ ຸ ບ ລ າ ຍ ງ ານ ຜ ົ ນ ການ ຕ ິ ດ ຕ າ ມ ກ ວ ດ ກ າ ແ ລ ະ ສ ະ ເ ໜ ີ ມ າ ດ ຕ ະ ການ ແ ກ ້ ໄ ຂ ບ ັ ນ ຫ າ ດ ັ ່ ງ ກ ່ າ ວ ຕ ໍ່ ຂ ັ ້ ນ ເ ທ ິ ງ ມ ີ ທ ິ ດ ຊ ີ້ ນ ຳ ໃ ຫ ້ ທ ັ ນ ເ ວ ລ າ;

4) ເ ພ ີ ່ ມ ທ ະ ວ ິ ຄ ວ າ ມ ເ ປ ັ ນ ເ ຈ ົ້ າ ການ ຂ ອ ງ ສ ະ ມ າ ຊ ິ ກ ສ ະ ພ າ ແ ຫ ່ ງ ຊ າ ດ ໃ ນ ການ ເ ຂ ົ້ າ ຮ ່ ວ ມ ກ ອ ງ ປ ະ ຊ ຸ ມ ສ ພ ຊ, ການ ຕ ິ ດ ຕ າ ມ ກ ວ ດ ກ າ, ການ ຊ ຸ ກ ຍ ູ້ ແ ລ ະ ເ ກ ັ ບ ກ ຳ ຂ ໍ້ ມ ູ ນ ສ ະ ພ າ ບ ການ ປ ະ ຕ ິ ບ ັ ດ ແ ຜ ນ ພ ັ ດ ທ ະ ນ າ ເ ສ ດ ຖ ະ ກ ິ ດ-ສ ັ ງ ຄ ົ ມ, ແ ຜ ນ ງ ົ ບ ປ ະ ມ ານ ແ ຫ ່ ງ ລ ັ ດ; ການ ເ ຄ າ ລ ົ ບ, ປ ະ ຕ ິ ບ ັ ດ ລ ັ ດ ຖ ະ ທ ຳ ມ ະ ນ ູ ນ, ກ ົ ດ ໝ າ ຍ ຂ ອ ງ ບ ັ ນ ດ າ ອ ົ ງ ການ ລ ັ ດ, ການ ຈ ັ ດ ຕ ັ ້ ງ ຜ ັ ນ ຂ ະ ຫ ຍ າ ຍ ມ ະ ຕ ິ ຂ ອ ງ ສ ພ ຊ, ຂ ອ ງ ຄ ປ ຈ.ສ ພ ຊ; ປ ະ ສ ານ ສ ົ ມ ທ ົ ບ ກ ັ ບ ສ ະ ພ າ ປ ະ ຊ າ ຊ ົ ນ ຂ ັ ້ ນ ແ ຂ ວ ງ ເ ພ ື ່ ອ ເ ຄ ື່ ອ ນ ໄ ຫ ວ ຕ າ ມ ສ ິ ດ ແ ລ ະ ໜ ້ າ ທ ີ ່ ຂ ອ ງ ຕ ົ ນ;

5) ຄ ປ ຈ.ສ ພ ຊ, ກ ົ ງ ຈ ັ ກ ການ ຈ ັ ດ ຕ ັ ້ ງ ຂ ອ ງ ສ ພ ຊ ເ ອ າ ໃ ຈ ໃ ສ ່ ຜ ັ ນ ຂ ະ ຫ ຍ າ ຍ ແ ຜ ນ ການ ສ ະ ບ ັ ບ ນ ີ້ ອ ອ ກ ເ ປ ັ ນ ແ ຜ ນ ວ ຽ ກ ຈ ຸ ດ ສ ຸ ມ ອ ັ ນ ລ ະ ອ ຽ ດ ຂ ອ ງ ຕ ົ ນ ແ ລ ະ ເ ປ ັ ນ ເ ຈ ົ້ າ ການ ປ ະ ສ ານ ສ ົ ມ ທ ົ ບ ກ ັ ບ ອ ົ ງ ການ ອ ື່ ນ ໆ ຂ ອ ງ ລ ັ ດ ທ ັ ງ ຢ ູ ່ ຂ ັ ້ ນ ສ ູ ນ ກ າ ງ ແ ລ ະ ທ ້ ອ ງ ຖ ິ ່ ນ ເ ພ ື ່ ອ ສ ້ າ ງ ສ ິ ່ ງ

ພັກແກນນຳລັດຖະບານມາເລເຊຍ ຊະນະການເລືອກຕັ້ງສະພາທ້ອງຖິ່ນ

ນາງ ປານາລັກ ພົມມິໄຊ

ພັກແກນນຳລັດຖະບານມາເລເຊຍ ຊະນະການເລືອກຕັ້ງສະມາຊິກສະພາທ້ອງຖິ່ນຂອງລັດມາລາກາ ນັ້ນອາດຈະເປັນຕົວຊີ້ວັດທິດທາງຂອງການເລືອກຕັ້ງໃນລະດັບຊາດ ເຊິ່ງອາດຈະມີຂຶ້ນໃນກາງປີໜ້າ.

ອີງຕາມການລາຍງານຂ່າວ ໃນວັນທີ 21 ພະຈິກ 2021 ໃຫ້ຮູ້ວ່າ: ຜົນການເລືອກຕັ້ງສະມາຊິກສະພາທ້ອງຖິ່ນຂອງລັດມາລາກາ ທີ່ຢູ່ໃນພາກຕາເວັນຕົກສ່ຽງໃຕ້ຂອງປະເທດມາເລເຊຍ ຈຳນວນ 28 ບ່ອນນັ່ງ ໃນວັນເສົາທີ 20 ພະຈິກນີ້, ພັກມາລາຍູສາມັກຄີແຫ່ງຊາດ ແລະ ພັກນ້ອຍອີກ 2 ພັກໃນແນວຮ່ວມແຫ່ງຊາດ ໄດ້ຮັບການເລືອກຕັ້ງຫລາຍທີ່ສຸດ ຈຳນວນ 21 ບ່ອນນັ່ງ ໄດ້ເພີ່ມຂຶ້ນ 9 ບ່ອນນັ່ງ ຈາກການເລືອກຕັ້ງ 3 ປີຜ່ານມາ.

ການເລືອກຕັ້ງຄັ້ງນີ້, ແມ່ນການເລືອກຕັ້ງໃຫຍ່ຄັ້ງທຳອິດ ນັບຕັ້ງແຕ່ທ່ານ ອິສມາອິນ ຊາບຣີ ເຊິ່ງເປັນ ສະມາຊິກພັກມາລາຍູສາມັກຄີແຫ່ງຊາດ ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີ ເມື່ອເດືອນສິງຫາຜ່ານມາ ແລະ ເປັນເທື່ອທຳອິດໃນຮອບ 3 ປີ ທີ່ພັກມາລາຍູສາມັກຄີແຫ່ງຊາດ ໄດ້ກັບຄືນມາຮັບໄຊຊະນະໃນການເລືອກຕັ້ງ ເຖິງແມ່ນວ່າເປັນການເລືອກຕັ້ງຂັ້ນທ້ອງຖິ່ນກໍຕາມ ຫລັງຈາກທີ່ໄດ້ເສຍໄຊໃນການເລືອກຕັ້ງແຫ່ງຊາດໃນປີ 2018 ແລະ ເປັນຄັ້ງທຳອິດນັບແຕ່ມາເລເຊຍໄດ້ຮັບເອກະລາດຈາກອັງກິດໃນປີ 1957 ພັກມາລາຍູສາມັກຄີແຫ່ງຊາດ ໄດ້ພົ້ນຈາກການຜູກຂາດການເປັນລັດຖະບານ.

ມາເລເຊຍມີກຳນົດຈະຈັດການເລືອກຕັ້ງທົ່ວໄປໃນປີ 2023. ຢ່າງໃດກໍຕາມ, ມີຄວາມຄາດວ່າ ລັດຖະສະພາອາດຈະຖືກຍຸບ ແລະ ການເລືອກຕັ້ງຈະຈັດຂຶ້ນໃນກາງປີໜ້າ.

ຕາມການລົງນາມບົດບັນທຶກ ຄວາມເຂົ້າໃຈທາງດ້ານການເມືອງກັບ ຝ່າຍຄ້ານ ໃຫ້ຮູ້ວ່າ: ຜູ້ນຳມາເລເຊຍ ຈະບໍ່ຍຸບສະພາຜູ້ແທນລາສະດອນ ກ່ອນເດືອນກໍລະກົດປີໜ້າ, ອະນຸຍາດ ໃຫ້ສະມາຊິກຝ່າຍຄ້ານເຂົ້າຮ່ວມຄະນະກຳມະການປະຕິຮູບແຫ່ງຊາດ, ຫລຸດຜ່ອນອາຍຸຂັ້ນຕ່ຳຂອງຜູ້ມີສິດລົງຄະແນນສຽງຈາກ 21 ປີເປັນ 18 ປີ, ໃຫ້ຜູ້ນຳຝ່າຍຄ້ານໄດ້ຮັບສະຫວັດດີການເຊັ່ນດຽວກັນກັບລັດຖະມົນຕີ ແລະ ຈຳກັດອາຍຸການດຳລົງຕຳແໜ່ງຂອງນາຍົກລັດຖະມົນຕີໃຫ້ສູງສຸດສອງສະໄໝ ເຊິ່ງບໍ່ເກີນ 10 ປີ.

ຝ່າຍຄ້ານໄດ້ຕອບຮັບ ດ້ວຍການລົງຄະແນນສຽງສະໜັບສະໜູນກົດໝາຍທີ່ສຳຄັນຫລາຍສະບັບ ລວມທັງແຜນງົບປະມານປະຈຳປີ 2022 ທີ່ໄດ້ຮັບການອະນຸມັດໃນເດືອນຕຸລາ ຜ່ານມາ.

ແຫລ່ງຂ່າວ: Daily News

ປາກົດສະຖານ ຜ່ານຮ່າງກົດໝາຍຕ້ານຄະດີຂົ່ມຂືນ

ນາງ ເມືອງມະໂນ

ເມື່ອທ້າຍອາທິດຜ່ານມາ ໄດ້ມີລາຍງານຂ່າວວ່າ: ສະມາຊິກລັດຖະສະພາຂອງປາກິສະຖານ ໄດ້ຜ່ານຮ່າງກົດໝາຍຕ້ານການຂົ່ມຂືນໃໝ່ ແນໃສ່ເພີ່ມຄວາມໝັ້ນໃຈ ແລະ ກຳນົດມາດຕະການລົງโทດທີ່ຮຸນແຮງຂຶ້ນ ເຊິ່ງຜູ້ກະທຳຜິດທາງເພດທີ່ຖືກຕັດສິນວ່າ ມີຄວາມຜິດຂົ່ມຂືນຊ້ຳອາດຈະຖືກລົງโทດໂດຍການສີດສານເຄມີເຂົ້າໄປໃນອັນທະ.

ການເຄື່ອນໄຫວດັ່ງກ່າວ ແມ່ນເພື່ອຕອບສະໜອງຕໍ່ຄວາມຄຽດແຄ້ນຂອງປະຊາຊົນທີ່ເພີ່ມຂຶ້ນໃນ ຫວ່າງມໍ່ໆມານີ້ ກ່ຽວກັບການຂົ່ມຂືນ ແມ່ຍິງ ແລະ ເດັກໃນປະເທດທີ່ເພີ່ມຂຶ້ນ ທັງຄວາມຮຽກຮ້ອງເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍທາງເພດໄດ້ຮັບຄວາມຍຸຕິທຳ.

ຮ່າງກົດໝາຍດັ່ງກ່າວ ລະບຸວ່າ ລັດຖະບານປາກິດຖານ ຕ້ອງສ້າງຕັ້ງສານພິເສດໃນທົ່ວປະເທດ ເພື່ອເລັ່ງລັດການດຳເນີນຄະດີການຂົ່ມຂືນ ແລະ ໃຫ້ແນ່ໃຈວ່າ ຄະດີການລ່ວງລະເມີດທາງເພດຈະຖືກຕັດສິນຢ່າງໄວວາ ໂດຍສະເພາະແມ່ນພາຍໃນ 4 ເດືອນ.

ສ່ວນຜູ້ທີ່ຖືກຕັດສິນໃນຂໍ້ຫາ ຮ່ວມກັນຂົ່ມຂືນ ກຸ່ມຄົນນັ້ນຈະຖືກຕັດສິນປະຫານຊີວິດ ຫລື ຈຳຄຸກຕະຫລອດຊີວິດ.

ການສັກຢາໃສ່ອັນທະ ຈະເຮັດໃຫ້ຄວາມຕ້ອງການທາງເພດຫລຸດລົງ ເຊິ່ງເປັນຮູບແບບການລົງโทດທາງກົດໝາຍໃນປະເທດຕ່າງໆ ລວມທັງເກົາຫລີໃຕ້, ໂປແລນ, ສາທາລະນະລັດເຊັກ ແລະ ໃນບາງລັດຂອງສະຫະລັດອາເມລິກາ.

ແຫລ່ງຂ່າວ: CNN

ບໍ່ໄດ້ຮັບຫນັງສືພິມໂທ: +856 (21) 454563, ຕ້ອງການແຈ້ງຂ່າວໂທ: +856 (21) 413522
ອອກແບບ-ຈັດຫນ້າໂດຍ: ນາງ ກຸກກິກ ບຸດດາໄຊ ແລະ ນາງ ນິດຕາ ຄຸນປາກດີ